ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===000===


ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ

ໂທລະສັບ: 212496, ແຟກ 213495


3774

ເລກທີ /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 14 OCT 2014

# ແຈ້ງການ

ຮຽນ: ທ່ານ ຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ໃນທົ່ວປະເທດ.

ເລື່ອງ: ການຕິດຕາມກວດກາຢາປົວພະຍາດ ທີ່ມີການປອມແປງ (Myda-B Cream 5g) ຈໍລະຈອນຈຳໜ່າຍຢູ່ໃນ ສ ປປ ລາວ.

- ອີງຕາມ ການລາຍງານຈາກທ້ອງຖິ່ນ ກ່ຽວກັບການກວດພົບຢາທີ່ບໍ່ຮັບປະກັນຄຸນນະພາບ.

ເພື່ອຈັດຕັ້ງປະຕິບັດວຽກງານການຕິດຕາມຄຸນນະພາບຢາທີ່ຈໍລະຈອນ ຢູ່ ສປປ ລາວ ແລະ ປະຕິບັດມາດຕະການຢ່າງທັນການ. ໃນປະຈຸບັນໄດ້ມີສະພາບບັນຫາຢາທີ່ບໍ່ຮັບປະກັນຄຸນນະພາບ ຢາປອມແປງ ຈໍລະຈອນຈຳໜ່າຍ ຢູ່ ສປປລາວ. ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງທ່ານ ດັ່ງລາຍລະອຽດຄື:

1. ສະເໜີຄະນະພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດ ຊີ້ນຳຂະແໜງ ອາຫານ ແລະ ຢາ ແຂວງຂອງຕົນ ເພື່ອລົງຕິດຕາມກວດກາຢາ ທີ່ມີບັນຫາດ້ານຄຸນນະພາບ (ຢາປອມ) ຈໍລະຈອນໃນຕະໜ່າງ ສາທາລະນະສຸກ ນັບທັງພາກລັດ ແລະ ເອກະຊົນ (ໂຮງໝໍແຂວງ, ເມືອງ, ສຸກສາລາ ແລະ ຮ້ານຂາຍຢາ).
2. ໃນການລົງຕິດຕາມກວດກາແມ່ນໃຫ້ເນັ້ນໃສ່ຢາ Myda B Cream ຂະໜາດບັນຈຸ ແມ່ນ 5 mg ທີ່ຜະລິດໂດຍບໍລິສັດ T-Man Pharmac Limited Thailand ປະເທດໄທ, ຈົດທະບຽນ ນຳເຂົ້າ ແລະ ຈຳໜ່າຍໂດຍ ບໍລິສັດ ແກ້ວສີລາ ຈຳກັດ ເຊິ່ງຜະລິດຕະພັນຢາດັ່ງກ່າວ ໄດ້ຖືກປອມແປງ ສະຫລາກຫຸ້ມຫໍ່ ແລະ ມີວາງຂາຍຈຳໜ່າຍຢູ່ຕາມຮ້ານຂາຍຍ່ອຍຢາ. ຖ້າສັງເກດໃຫ້ດີແລ້ວ ຈະເຫັນວ່າ ສະຫລາກຂອງຜະລິດຕະພັນຢາທີ່ເປັນຜະລິດຕະພັນຂອງແທ້ ແລະ ປອມແປງ ມີຄວາມແຕກຕ່າງກັນຢ່າງຊັດເຈນ. ຈາກຜົນຂອງການວິໄຈ ພົບວ່າ ຢາປອມແມ່ນບໍ່ມີປະສິດທິພາບ, ປະສິດທິຜົນໃນການປິ່ນປົວ, ມີຕົວຢາ ໃນປະລິມານທີ່ຕ່ຳກວ່າມາດຕະຖານຫລາຍ (ລະອຽດຮູບພາບທີ່ໄດ້ຄັດຕິດ).
3. ຖ້າພົບເຫັນຢາດັ່ງກ່າວໃຫ້ຍຶດ ແລະ ເກັບຮັກສາໄວ້ນຳຂະແໜງອາຫານ ແລະ ຢາແຂວງ ແລະ ພ້ອມທັງ ເກັບກຳຂໍ້ມູນໃນການສະໜອງ ຫຼື ແຫຼ່ງທີ່ມາໃຫ້ລະອຽດ ແລ້ວລາຍງານໃຫ້ກົມອາຫານ ແລະ ຢາ ຊາບໂດຍດ່ວນ. (ທ່ານສາມາດເຂົ້າເບິ່ງແຈ້ງການສະບັບນີ້ໄດ້ຢູ່ ເວບໄຊຂອງ ກົມອາຫານ ແລະ ຢາ: www.fdd.gov.la)

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຂໍຄວາມຮ່ວມມືຕາມທາງຄວນດ້ວຍ

ຮຽນມາດ້ວຍຄວາມນັບຖື.

**ຫົວໜ້າກົມອາຫານ ແລະ ຢາ**

ບ່ອນນຳສົ່ງ: ກອງກວດກາອາຫານ ແລະ ຢາ

ດຣ. ສົມທະວີ ຈາງວັຣຍົມມິດ

<table>
<tr><th>ຢາແທ້</th><th>ຢາປອມແປງ</th></tr>
<tr><td>
</td><td>
</td></tr>
<tr><td>
</td><td>
</td></tr>
<tr><td>ຜະລິດຕະພັນຢາແທ້:<br>ຜະລິດໂດຍ ໂຮງງານ T-Man Pharma Limited Thailand<br>ຈົດທະບຽນ ແລະ ນຳເຂົ້າໂດຍ ບໍລິສັດ ແກ້ວສີລາ ການຢາ ຈຳກັດ (ແຂວງສະຫວັນນະເຂດ).</td><td>ຢາປອມ: ເປັນຢາທີ່ຕົກມາດຕະຖານ, ມີປະລິມານຕົວຢາຕໍ່າກວ່າຂອບເຂດ ແລະ ມາດຕະຖານ ທີ່ກຳນົດ:<br>- ມີຕົວຢາ Betamethasone ພຽງແຕ່ 3,1%, (ຂອບເຂດມາດຕະຖານ ແມ່ນ 90,0%-115,0%)<br>- ມີຕົວຢາ Blotrimazole ພຽງແຕ່ 4,3% (ແຕ່ຂອງເຂດມາດຕະຖານ ແມ່ນ 90,0%-115,0%)</td></tr>
</table>